ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 606/ລບ
ນະຄອນຫຼວງວຽງຈັນ, ວັນທີ 26.11.2020.

# ດຳລັດ
## ວ່າດ້ວຍ ກຸ່ມ ແລະ ສະຫະກອນ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0619/ກປ, ລົງວັນທີ 17 ກັນຍາ 2020.

ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ຕິດຕາມ ກວດກາ ກຸ່ມ ແລະ ສະຫະກອນ ເພື່ອສົ່ງເສີມ ແລະ ພັດທະນາການຜະລິດ, ການບໍລິການ ແລະ ການດຳເນີນທຸລະກິດ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ໝັ້ນຄົງ ແນໃສ່ແກ້ໄຂຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ ຂອງປະຊາຊົນລາວບັນດາເຜົ່າໃຫ້ດີຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ກຸ່ມ ແລະ ສະຫະກອນ

ກຸ່ມ ແມ່ນ ການຈັດຕັ້ງລວມໝູ່ຂອງປະຊາຊົນລາວທີ່ມີອາຊີບ ກະສິກຳ, ຫັດຖະກຳ, ຄ້າຂາຍ, ການບໍລິການ ຫຼື ອາຊີບອື່ນ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອຮ່ວມມືຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ລະຫວ່າງ ສະມາຊິກ ແລະ ຄອບຄົວສະມາຊິກດ້ວຍກັນ ທາງດ້ານການຜະລິດ ແລະ/ຫຼື ການບໍລິການ.

ສະຫະກອນ ແມ່ນ ການຈັດຕັ້ງທຸລະກິດລວມໝູ່ຂອງຜູ້ປະກອບອາຊີບ ກະສິກຳ, ຫັດຖະກຳ, ຄ້າຂາຍ, ການບໍລິການ ຫຼື ອາຊີບອື່ນ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອຮ່ວມມືຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ທາງດ້ານທຶນຮອນ, ປະສົບການ ແລະ ເຕັກນິກ ໃນການດຳເນີນທຸລະກິດ ການຜະລິດ, ການຄ້າ ຫຼື ການບໍລິການ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ກຸ່ມການຜະລິດ ແລະ ການບໍລິການຕາມຂະແໜງການ** ໝາຍເຖິງ ກຸ່ມທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຕາມກົດຈະກຳຂອງແຕ່ລະຂະແໜງການ;

2. **ກຸ່ມບໍລິການດ້ານການເງິນ** ໝາຍເຖິງ ກຸ່ມທ້ອນເງິນ, ກອງທຶນບ້ານ ຫຼື ທະນາຄານບ້ານ ທີ່ໃຫ້ການບໍລິການເງິນອອມ, ເງິນຝາກປະຢັດ, ປ່ອຍເງິນກູ້, ໃຫ້ເງິນສະຫວັດດີການ ແລະ ການບໍລິການດ້ານການເງິນ ໃຫ້ແກ່ສະມາຊິກຂອງຕົນ;

3. **ກຸ່ມທ້ອນເງິນ** ໝາຍເຖິງ ກຸ່ມຝາກເງິນປະຢັດ ແລະ ສິນເຊື່ອ ຊຶ່ງມີການລະດົມທຶນຈາກເງິນຝາກຂອງສະມາຊິກ ຫຼື ເງິນອຸດໜູນ ແລະ ໃຫ້ການບໍລິການ ຮັບເງິນຝາກ ແລະ ປ່ອຍກູ້ ແກ່ສະມາຊິກຂອງຕົນ;

4. **ສະຫະກອນກະສິກຳ ແລະ ປ່າໄມ້** ໝາຍເຖິງ ການຈັດຕັ້ງທຸລະກິດລວມໝູ່ ຂອງຜູ້ປະກອບອາຊີບກ່ຽວກັບການ ປູກຝັງ, ລ້ຽງສັດ, ປະມົງ, ປຸງແຕ່ງ ແລະ ບໍລິການ ດ້ານກະສິກຳ ແລະ ປ່າໄມ້;

5. **ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ** ໝາຍເຖິງ ການຈັດຕັ້ງທຸລະກິດລວມໝູ່ຂອງຜູ້ທີ່ປະກອບອາຊີບດຽວກັນ ຫຼື ອາຊີບອື່ນ ທີ່ສະມັກໃຈສ້າງຕັ້ງຂຶ້ນ;

6. **ສະຫະກອນການຄ້າ** ໝາຍເຖິງ ການຈັດຕັ້ງທຸລະກິດລວມໝູ່ ຂອງຜູ້ຊື້, ຜູ້ຂາຍ ແລະ ຜູ້ບໍລິການສິນຄ້າ ທີ່ສະໝັກໃຈຕັ້ງຂຶ້ນ ເພື່ອຮ່ວມມືຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃນການຊື້, ຂາຍ ແລະ ການບໍລິການສິນຄ້າ;

7. **ສະຫະກອນຫັດຖະກຳ ແລະ ປຸງແຕ່ງ** ໝາຍເຖິງ ທຸລະກິດລວມໝູ່ທີ່ດຳເນີນກິດຈະກຳການຜະລິດ ດ້ວຍການນຳໃຊ້ແຮງງານຄົນ ແລະ/ຫຼື ເຄື່ອງຈັກ ໂດຍຜ່ານຂະບວນການຜະລິດ ແປຮູບວັດຖຸດິບ ຫຼື ວັດຖຸເຄິ່ງສຳເລັດຮູບ ໃຫ້ເປັນສິນຄ້າ;

8. **ສະຫະກອນການບໍລິການ** ໝາຍເຖິງ ການຮ່ວມກຸ່ມຂອງປະຊາຊົນ ທີ່ມີອາຊີບ ການຂົນສົ່ງ, ການທ່ອງທ່ຽວ, ການກໍ່ສ້າງ, ການແພດ ຫຼື ການບໍລິການອື່ນ ທີ່ສະໝັກໃຈສ້າງຕັ້ງຂຶ້ນ;

9. **ຮຸ້ນ** ໝາຍເຖິງ ທຶນຂອງສະຫະກອນ ທີ່ແບ່ງອອກເປັນສ່ວນ ຊຶ່ງມີມູນຄ່າບໍ່ເທົ່າກັນ ຫຼື ເທົ່າກັນ ຂຶ້ນກັບຮູບແບບ ຂອງສະຫະກອນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້;

10. **ນະວັດຕະກຳ** ໝາຍເຖິງ ການນຳໃຊ້ຄວາມຮູ້, ຄວາມສາມາດ, ກຳມະວິທີການຜະລິດ ແລະ ປະສົບການດ້ານວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຄົ້ນຄວ້າ, ປະດິດສ້າງ, ບໍລິການ, ພັດທະນາຜະລິດຕະພັນ, ສິນຄ້າທີ່ມີຄຸນນະພາບສູງ ໃນຮູບແບບໃໝ່ອອກສູ່ສັງຄົມ.

**ມາດຕາ 4 ຫຼັກການກ່ຽວກັບ ກຸ່ມ ແລະ ສະຫະກອນ**

ການເຄື່ອນໄຫວວຽກງານ ກຸ່ມ ແລະ ສະຫະກອນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງ ກັບນະໂຍບາຍ, ກົດໝາຍ ແລະ ລະບຽບການ;
2. ຮັບປະກັນການຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນສິດ ແລະ ຜົນປະໂຫຍດ ຂອງສະມາຊິກ, ກຸ່ມ, ສະຫະກອນ ແລະ ລັດ;
4. ຮັບປະກັນຄວາມສະເໝີພາບ, ຄວາມໂປ່ງໃສ, ວ່ອງໄວ ແລະ ຍຸຕິທຳ;
5. ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
6. ສອດຄ່ອງ ກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ພົວພັນກັບການສ້າງຕັ້ງ ແລະ ການເຄື່ອນໄຫວຂອງ ກຸ່ມ ແລະ ສະຫະກອນ ຢູ່ ສປປ ລາວ.

**ມາດຕາ 6 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານ ກຸ່ມ ແລະ ສະຫະກອນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກນິກວິທະຍາສາດ, ເຕັກໂນໂລຊີ, ການຄ້າ, ການລົງທຶນ, ການພັດທະນາຊັບພະຍາກອນມະນຸດ, ການເຂົ້າຮ່ວມ ແລະ ປະຕິບັດ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

# ພາກທີ II
# ກຸ່ມ
## ໝວດທີ 1
## ການສ້າງຕັ້ງກຸ່ມ

**ມາດຕາ 7 ປະເພດກຸ່ມ**

ກຸ່ມ ຈັດແບ່ງເປັນປະເພດ ດັ່ງນີ້:

1. ກຸ່ມການຜະລິດ ແລະ ການບໍລິການ ຕາມຂະແໜງການ;
2. ກຸ່ມບໍລິການດ້ານການເງິນ;
3. ກຸ່ມອື່ນ.

ການສ້າງຕັ້ງກຸ່ມບໍລິການດ້ານການເງິນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 8 ເງື່ອນໄຂການສ້າງຕັ້ງກຸ່ມ**

ການສ້າງຕັ້ງກຸ່ມ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີສະມາຊິກຂອງກຸ່ມ ຢ່າງໜ້ອຍ ຫ້າ ຄົນ ຊຶ່ງເປັນພົນລະເມືອງລາວ ທີ່ມີອາຍຸ ສິບແປດ ປີ ຂຶ້ນໄປ ແລະ ສະມາຊິກແຕ່ລະຄົນ ບໍ່ໄດ້ຢູ່ໃນສຳມະໂນຄົວດຽວກັນ;
2. ໃນກໍລະນີມີສະມາຊິກ ສິບ ຄົນ ຂຶ້ນໄປ ຕ້ອງມີສະຖານທີ່ເຮັດວຽກຂອງກຸ່ມ ຊຶ່ງສາມາດນຳໃຊ້ສະໂມສອນບ້ານ, ໂຮງຮຽນ ຫຼື ເຮືອນຂອງຫົວໜ້າກຸ່ມ;
3. ເງື່ອນໄຂອື່ນ ຕາມການກຳນົດຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 9 ກອງປະຊຸມສ້າງຕັ້ງ**

ສະມາຊິກ ທີ່ມີຈຸດປະສົງສ້າງຕັ້ງກຸ່ມ ຕ້ອງໄດ້ຈັດກອງປະຊຸມສ້າງຕັ້ງ ເພື່ອປຶກສາຫາລື ແລະ ກະກຽມການສ້າງຕັ້ງກຸ່ມ ຊຶ່ງມີເນື້ອໃນ ດັ່ງນີ້:

1. ສ້າງຄວາມຮັບຮູ້ ກ່ຽວກັບການສ້າງຕັ້ງກຸ່ມ ທີ່ຈະສ້າງ;
2. ປຶກສາຫາລື ກ່ຽວກັບການສ້າງຕັ້ງ ເປັນຕົ້ນ ປະເພດ, ຊື່, ຈຳນວນສະມາຊິກ ແລະ ແຜນການສ້າງຕັ້ງ;
3. ພິຈາລະນາຮັບຮອງ ແຜນການເຄື່ອນໄຫວ ຫຼື ແຜນດຳເນີນງານ ແລະ ກົດລະບຽບ;
4. ເລືອກຕັ້ງຄະນະບໍລິຫານ ຊຸດທຳອິດ.

**ມາດຕາ 10 ການສະເໜີສ້າງຕັ້ງກຸ່ມ**

ຜູ້ທີ່ມີຈຸດປະສົງ ສ້າງຕັ້ງກຸ່ມໃນຂະແໜງໃດໜຶ່ງ ໃຫ້ຍື່ນຄຳຮ້ອງ ແລະ ເອກະສານປະກອບທີ່ກ່ຽວ ຂ້ອງ ຕໍ່ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ຫຼື ພະແນກການທີ່ກ່ຽວຂ້ອງຂັ້ນແຂວງ ໃນກໍລະນີບໍ່ມີຫ້ອງການຢູ່ຂັ້ນເມືອງ ບ່ອນກຸ່ມຈະຕັ້ງຢູ່.

ເອກະສານປະກອບຂໍສ້າງຕັ້ງກຸ່ມ ມີ ດັ່ງນີ້:

1. ຄຳຮ້ອງຂໍສ້າງຕັ້ງກຸ່ມ ຕາມແບບພິມ ທີ່ຂະແໜງການກ່ຽວຂ້ອງ ກຳນົດ;
2. ບັນຊີລາຍຊື່ສະມາຊິກຂອງກຸ່ມ ແລະ ຊີວະປະຫວັດຄະນະບໍລິຫານ;
3. ບົດບັນທຶກກອງປະຊຸມສ້າງຕັ້ງກຸ່ມ;
4. ກົດລະບຽບຂອງກຸ່ມ;
5. ໂຄງຮ່າງການຈັດຕັ້ງຂອງກຸ່ມ;
6. ແຜນດຳເນີນງານຂອງກຸ່ມ.

ມາດຕາ 11 ການອະນຸຍາດສ້າງຕັ້ງກຸ່ມ

ພາຍຫຼັງໄດ້ຮັບຄຳຮ້ອງຂໍສ້າງຕັ້ງກຸ່ມ ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ຫຼື ພະແນກການທີ່ກ່ຽວຂ້ອງຂັ້ນແຂວງ ໃນກໍລະນີບໍ່ມີຫ້ອງການຢູ່ຂັ້ນເມືອງນັ້ນ ຕ້ອງຄົ້ນຄວ້າພິຈາລະນາ ເອກະສານຂໍສ້າງຕັ້ງກຸ່ມ ເພື່ອອອກໃບອະນຸຍາດ ພາຍໃນເວລາ ເຈັດ ວັນ ລັດຖະການ, ແລ້ວແຈ້ງໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ຫຼື ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ໃນກໍລະນີບໍ່ມີຫ້ອງການຢູ່ຂັ້ນເມືອງນັ້ນ ພາຍໃນເວລາ ສາມ ວັນ ລັດຖະການ ເພື່ອຂຶ້ນບັນຊີກຸ່ມ. ໃນກໍລະນີປະຕິເສດການຂໍຮ້ອງ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມທັງເຫດຜົນ ພາຍໃນເວລາ ເຈັດ ວັນ ລັດຖະການ.

ໃບອະນຸຍາດສ້າງຕັ້ງກຸ່ມ ມີອາຍຸການນຳໃຊ້ ຕະຫຼອດໄລຍະການດຳເນີນກິດຈະການຂອງກຸ່ມ.

## ໝວດທີ 2
## ສິດ ແລະ ພັນທະຂອງກຸ່ມ

**ມາດຕາ 12 ສິດຂອງກຸ່ມ**

ກຸ່ມ ມີ ສິດ ດັ່ງນີ້:

1. ດຳເນີນ ການຜະລິດ, ການຄ້າ ແລະ ການບໍລິການ ຕາມທີ່ໄດ້ຮັບອະນຸຍາດ;
2. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ຈັດກອງປະຊຸມ ເພື່ອປຶກສາຫາລືບັນຫາຕ່າງໆຂອງກຸ່ມ;
3. ສະເໜີຂໍນະໂຍບາຍ, ການຊ່ວຍເຫຼືອ ດ້ານເຕັກນິກ, ວິຊາການ ແລະ ທຶນຮອນ ຈາກພາກສ່ວນກ່ຽວຂ້ອງ ທັງພາກລັດ ແລະ ພາກເອກະຊົນ;
4. ສ້າງເງື່ອນໄຂໃຫ້ສະມາຊິກ ສາມາດເຂົ້າເຖິງແຫຼ່ງທຶນ;
5. ພັດທະນາຕົນເອງ ໃຫ້ສາມາດກ້າວຂຶ້ນເປັນສະຫະກອນ;
6. ຈັດ ແລະ ເຂົ້າຮ່ວມ ການວາງສະແດງ, ຈຳໜ່າຍຜະລິດຕະພັນ;
7. ພົວພັນຮ່ວມມືກັບກຸ່ມອື່ນ;
8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 13 ພັນທະຂອງກຸ່ມ**

ກຸ່ມ ມີ ພັນທະ ດັ່ງນີ້:

1. ເຄື່ອນໄຫວຕາມກົດລະບຽບຂອງກຸ່ມ;
2. ສ້າງ ແລະ ພັດທະນາ ກຸ່ມ ແລະ ສະມາຊິກ ໃຫ້ເຂັ້ມແຂງ;
3. ປົກປ້ອງຜົນປະໂຫຍດອັນຊອບທຳຂອງສະມາຊິກ ແລະ ໃຫ້ການຊ່ວຍເຫຼືອ ແກ່ສະມາຊິກ ແລະ ຄອບຄົວ ຕາມຄວາມສາມາດ;
4. ສ້າງແຜນເຄື່ອນໄຫວປະຈຳປີຂອງກຸ່ມ;
5. ລາຍງານໃຫ້ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ກ່ຽວກັບການໄດ້ຮັບການຊ່ວຍເຫຼືອ ດ້ານການເງິນ, ການປ່ຽນແປງການຈັດຕັ້ງ ແລະ ສະຖານທີ່ເຮັດວຽກຂອງກຸ່ມ ພາຍໃນເວລາ ສິບຫ້າ ວັນລັດຖະການ;
6. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງກຸ່ມ ໃຫ້ອົງການອະນຸຍາດ ແລະ ອົງການປົກຄອງຂັ້ນເມືອງ ບ່ອນກຸ່ມຕັ້ງຢູ່ ຢ່າງເປັນປົກກະຕິ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 14 ໂຄງປະກອບການຈັດຕັ້ງຂອງກຸ່ມ**

ໂຄງປະກອບການຈັດຕັ້ງຂອງກຸ່ມ ປະກອບດ້ວຍ:

1. ກອງປະຊຸມຂອງກຸ່ມ;
2. ຄະນະບໍລິຫານກຸ່ມ;
3. ສະມາຊິກກຸ່ມ.

**ມາດຕາ 15 ກອງປະຊຸມຂອງກຸ່ມ**

ກອງປະຊຸມຂອງກຸ່ມ ແມ່ນ ການຈັດຕັ້ງສູງສຸດຂອງກຸ່ມ ຊຶ່ງປະກອບດ້ວຍ:

1. ກອງປະຊຸມສາມັນ ເປີດຂຶ້ນ ຢ່າງໜ້ອຍ ປີ ລະຄັ້ງ;
2. ກອງປະຊຸມວິສາມັນ ເປີດຂຶ້ນເມື່ອໃດກໍໄດ້ ເພື່ອພິຈາລະນາບັນຫາ ສຳຄັນ, ຈຳເປັນ ແລະ ຮີບດ່ວນ ຕາມການຮຽກເຊີນ ຂອງຫົວໜ້າກຸ່ມ ຫຼື ສະມາຊິກທີ່ມີຈຳນວນ ໜຶ່ງສ່ວນສີ່ ຂອງສະມາຊິກທັງໝົດ.

ກອງປະຊຸມຂອງກຸ່ມ ຈະເປີດໄດ້ກໍຕໍ່ເມື່ອ ມີສະມາຊິກ ແຕ່ ສອງສ່ວນສາມ ຂຶ້ນໄປ ຂອງຈຳນວນສະມາຊິກທັງໝົດ.

**ມາດຕາ 16 ຄະນະບໍລິຫານກຸ່ມ**

ຄະນະບໍລິຫານກຸ່ມ ເປັນຜູ້ບໍລິຫານວຽກທຸກຢ່າງຂອງກຸ່ມ ແລະ ເປັນຕົວແທນຂອງກຸ່ມ ໃນການພົວພັນວຽກງານກັບບຸກຄົນພາຍນອກ ໂດຍມີການແບ່ງປັນວຽກງານໃຫ້ແຕ່ລະຄົນຮັບຜິດຊອບ ຊຶ່ງປະກອບດ້ວຍ ຫົວໜ້າ ແລະ ຮອງຫົວໜ້າກຸ່ມ ຈຳນວນໜຶ່ງ.

ຄະນະບໍລິຫານກຸ່ມ ໄດ້ຮັບການເລືອກຕັ້ງຈາກກອງປະຊຸມຂອງກຸ່ມ, ມີອາຍຸການ ຫ້າ ປີ ແລະ ສາມາດສະໝັກເລືອກຕັ້ງໄດ້ອີກ.

ຄະນະບໍລິຫານກຸ່ມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ, ຕິດຕາມ, ກວດກາ ແລະ ຊຸກຍູ້ ການເຄື່ອນໄຫວວຽກງານຂອງກຸ່ມ;
2. ສ້າງແຜນ ການຜະລິດ, ການຕະຫຼາດ ແລະ ການບໍລິການ ພ້ອມທັງຊຸກຍູ້ການຈັດຕັ້ງປະຕິບັດແຜນການດັ່ງກ່າວ;
3. ຈັດຫາປັດໄຈ ການຜະລິດ, ການຕະຫຼາດ ແລະ ການບໍລິການ ໃຫ້ສະມາຊິກ;
4. ປົກປ້ອງສິດ ແລະ ຜົນປະໂຫຍດຂອງສະມາຊິກ;
5. ຮຽກໂຮມ ແລະ ກະກຽມກອງປະຊຸມຂອງກຸ່ມ;
6. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງກຸ່ມ ຕໍ່ກອງປະຊຸມ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 17 ສະມາຊິກກຸ່ມ**

ສະມາຊິກກຸ່ມ ແມ່ນ ບຸກຄົນທີ່ມີຄວາມສະໝັກໃຈ ແລະ ປະຕິບັດຕາມກົດລະບຽບຂອງກຸ່ມ.

ສະມາຊິກກຸ່ມ ມີ ສິດ ດັ່ງນີ້:

1. ໄດ້ຮັບການຍົກລະດັບຄວາມຮູ້ ທາງດ້ານເຕັກນິກ, ວິຊາການ;
2. ໄດ້ຮັບການຊຸກຍູ້, ຊ່ວຍເຫຼືອ ໃນການເຂົ້າເຖິງແຫຼ່ງທຶນ, ຕະຫຼາດ, ຂໍ້ມູນຂ່າວສານ ແລະ ດ້ານອື່ນ;

3. ເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ເປັນຄະນະບໍລິຫານກຸ່ມ;

4. ສະເໜີເປີດກອງປະຊຸມວິສາມັນ ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດລະບຽບຂອງກຸ່ມ;

5. ສະເໜີໃຫ້ມີການກວດກາ ຊັບສິນ, ບັນຊີ ແລະ ການເງິນຂອງກຸ່ມ ໃນກໍລະນີທີ່ເຫັນວ່າບໍ່ມີຄວາມໂປ່ງໃສ;

6. ສະເໜີຫາຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ພິຈາລະນາແກ້ໄຂບັນຫາໃດໜຶ່ງ ໃນກໍລະນີກຸ່ມ ບໍ່ແກ້ໄຂ ຫຼື ບໍ່ສາມາດແກ້ໄຂໄດ້;

7. ລາອອກຈາກການເປັນສະມາຊິກກຸ່ມ ໂດຍໄດ້ຮັບຜົນປະໂຫຍດ ຕາມກົດລະບຽບຂອງກຸ່ມ;

8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ກົດລະບຽບຂອງກຸ່ມ.

ສະມາຊິກກຸ່ມ ມີ ພັນທະ ດັ່ງນີ້:

1. ຮັກສາຄວາມສາມັກຄີ ລະຫວ່າງສະມາຊິກກຸ່ມດ້ວຍກັນ;

2. ເຂົ້າຮ່ວມກອງປະຊຸມ, ສະເໜີ, ປະກອບຄຳເຫັນ ແລະ ລົງຄະແນນສຽງຂອງກຸ່ມ;

3. ປະກອບສ່ວນສ້າງກຸ່ມ ໃຫ້ມີຄວາມເຂັ້ມແຂງ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງກຸ່ມ;

4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ກົດລະບຽບຂອງກຸ່ມ.

ການເປັນສະມາຊິກກຸ່ມ ຈະສິ້ນສຸດລົງກໍຕໍ່ເມື່ອ ສະມາຊິກນັ້ນ ໄດ້ເສຍຊີວິດ, ເປັນບ້າເສຍຈິດ, ສະໝັກໃຈລາອອກ ຫຼື ລະເມີດກົດລະບຽບຂອງກຸ່ມຢ່າງຮ້າຍແຮງ ຊຶ່ງພົນການສິ້ນສຸດການເປັນສະມາຊິກ ໃຫ້ປະຕິບັດຕາມກົດລະບຽບຂອງກຸ່ມ.

## ໝວດທີ 4
## ການໂຮມ, ການແຍກ ແລະ ການຍຸບເລີກ

### ມາດຕາ 18 ການໂຮມກຸ່ມ

ກຸ່ມໜຶ່ງ ສາມາດໂຮມເຂົ້າ ກັບກຸ່ມໜຶ່ງ ຫຼື ຫຼາຍກຸ່ມ ທີ່ເຄື່ອນໄຫວໃນຂົງເຂດ ແລະ ຢູ່ໃນເຂດດຽວກັນ ເພື່ອກາຍເປັນກຸ່ມໃດໜຶ່ງ ຫຼື ສ້າງເປັນກຸ່ມໃໝ່ ແຕ່ຕ້ອງມີມະຕິເຫັນດີຈາກກອງປະຊຸມກຸ່ມຂອງແຕ່ລະກຸ່ມ, ມີການປັບປຸງການຈັດຕັ້ງ ແລະ ໄດ້ຮັບການອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

### ມາດຕາ 19 ການແຍກກຸ່ມ

ກຸ່ມໜຶ່ງ ສາມາດເປັນ ສອງກຸ່ມ ຫຼື ຫຼາຍກຸ່ມໄດ້ ແຕ່ຕ້ອງມີມະຕິເຫັນດີຈາກກອງປະຊຸມກຸ່ມ, ດຳເນີນການສ້າງຕັ້ງກຸ່ມທີ່ແຍກ ແລະ ໄດ້ຮັບການອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

### ມາດຕາ 20 ການຍຸບເລີກກຸ່ມ

ກຸ່ມ ຈະຖືກຍຸບເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ດ້ວຍຄວາມສະໝັກໃຈ ໂດຍມີມະຕິກອງປະຊຸມກຸ່ມ;

2. ບໍ່ມີການເຄື່ອນໄຫວ ຫຼື ດຳເນີນກິດຈະກຳ ຕາມທີ່ໄດ້ຮັບອະນຸຍາດ ພາຍໃນເວລາ ສາມ ເດືອນ ນັບແຕ່ວັນໄດ້ຮັບອະນຸຍາດ;

3. ເກີດເຫດສຸດວິໄສ;

4. ມີການລະເມີດກົດໝາຍຢ່າງຮ້າຍແຮງ.

ກຸ່ມ ທີ່ຍຸບເລີກ ຕ້ອງມີການຊຳລະສະສາງຊັບສິນ ແລະ ໜີ້ສິນ ຢ່າງຄົບຖ້ວນ ຕາມກົດໝາຍ.

# ພາກທີ III
# ສະຫະກອນ
## ໝວດທີ 1
## ການສ້າງຕັ້ງສະຫະກອນ

**ມາດຕາ 21 ປະເພດສະຫະກອນ**

ສະຫະກອນ ແບ່ງອອກເປັນ ຫົກ ປະເພດ ດັ່ງນີ້:

1. ສະຫະກອນກະສິກຳ ແລະ ປ່າໄມ້;
2. ສະຫະກອນການຄ້າ;
3. ສະຫະກອນຫັດຖະກຳ ແລະ ປຸງແຕ່ງ;
4. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
5. ສະຫະກອນບໍລິການ;
6. ສະຫະກອນອື່ນ.

ການສ້າງຕັ້ງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 22 ເງື່ອນໄຂການສ້າງຕັ້ງສະຫະກອນ**

ການສ້າງຕັ້ງສະຫະກອນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີສະມາຊິກ ຢ່າງໜ້ອຍ ເຈັດ ຄົນ ຊຶ່ງເປັນພົນລະເມືອງລາວ ທີ່ມີອາຍຸ ສິບແປດ ປີ ຂຶ້ນໄປ ແລະ ສະມາຊິກແຕ່ລະຄົນ ບໍ່ໄດ້ຢູ່ໃນສຳມະໂນຄົວດຽວກັນ;

2. ມີ ກົດລະບຽບ, ຫ້ອງການ, ທຶນ ແລະ ຊັບສິນ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວຂອງສະຫະກອນທີ່ໄດ້ກຳນົດໄວ້;

3. ມີສະມາຊິກ ຢ່າງໜ້ອຍ ໜຶ່ງ ຄົນ ທີ່ຜ່ານການຝຶກອົບຮົມ ກ່ຽວກັບວຽກງານສະຫະກອນ;

4. ເງື່ອນໄຂອື່ນ ຕາມການກຳນົດຂອງຂະແໜງການທີ່ກ່ຽວຂ້ອງ.

ສຳລັບກຸ່ມ ທີ່ມີຈຸດປະສົງສ້າງເປັນສະຫະກອນ ຫາກມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ແລະ ຂໍ້ 2 ຂ້າງເທິງນີ້ ໃຫ້ຍື່ນຄຳຮ້ອງຂໍຕໍ່ຂະແໜງການການທີ່ກ່ຽວຂ້ອງ ເພື່ອຂໍອະນຸຍາດສ້າງຕັ້ງ ແລະ ຂຶ້ນທະບຽນສະຫະກອນ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ.

**ມາດຕາ 23 ກອງປະຊຸມສ້າງຕັ້ງ**

ສະມາຊິກ ທີ່ມີຈຸດປະສົງສ້າງຕັ້ງສະຫະກອນ ຕ້ອງໄດ້ຈັດກອງປະຊຸມສ້າງຕັ້ງ ເພື່ອປຶກສາຫາລື ແລະ ກະກຽມການສ້າງຕັ້ງສະຫະກອນ ຊຶ່ງມີເນື້ອໃນ ດັ່ງນີ້:

1. ສ້າງຄວາມຮັບຮູ້ ກ່ຽວກັບການສ້າງຕັ້ງສະຫະກອນ ທີ່ຈະສ້າງ;

2. ປຶກສາຫາລື ກ່ຽວກັບການສ້າງຕັ້ງ ເປັນຕົ້ນ ປະເພດ, ຊື່, ຈຳນວນສະມາຊິກ ແລະ ແຜນການສ້າງຕັ້ງ;

3. ພິຈາລະນາຮັບຮອງ ແຜນການເຄື່ອນໄຫວ ຫຼື ແຜນດຳເນີນງານ, ກົດລະບຽບ ແລະ ເລືອກຕັ້ງຄະນະບໍລິຫານ ຊຸດທຳອິດ.

**ມາດຕາ 24 ການສະເໜີສ້າງຕັ້ງສະຫະກອນ**

ຜູ້ທີ່ມີຈຸດປະສົງ ສ້າງຕັ້ງສະຫະກອນ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານ ນຳຂະແໜງການທີ່ກ່ຽວຂ້ອງ ຕາມປະເພດສະຫະກອນ.

ເອກະສານປະກອບຂໍສ້າງຕັ້ງສະຫະກອນ ດັ່ງນີ້:

1. ຄຳຮ້ອງຂໍສ້າງຕັ້ງສະຫະກອນ ຕາມແບບພິມ ທີ່ຂະແໜງການກ່ຽວຂ້ອງກຳນົດ;

2. ແຜນດຳເນີນທຸລະກິດຂອງສະຫະກອນ;

3. ບັນຊີລາຍຊື່ສະມາຊິກ ພ້ອມດ້ວຍລາຍເຊັນຂອງແຕ່ລະຄົນ, ຈຳນວນຮຸ້ນ ແລະ ທຶນຈົດທະບຽນ ຂອງສະຫະກອນ;

4. ໃບຢັ້ງຢືນທີ່ຕັ້ງຫ້ອງການຂອງສະຫະກອນ;

5. ກົດລະບຽບຂອງສະຫະກອນ.

### ມາດຕາ 25 ການພິຈາລະນາອະນຸຍາດສ້າງຕັ້ງສະຫະກອນ

ພາຍຫຼັງໄດ້ຮັບຄຳຮ້ອງຂໍສ້າງຕັ້ງສະຫະກອນ ຂະແໜງການທີ່ກ່ຽວຂ້ອງ ຕ້ອງດຳເນີນການຄົ້ນຄວ້າການຂໍສ້າງຕັ້ງສະຫະກອນ ແລະ ອອກໃບອະນຸຍາດສ້າງຕັ້ງ ພາຍໃນເວລາ ສິບຫ້າ ວັນລັດຖະການ. ໃນກໍລະນີປະຕິເສດການຮ້ອງຂໍ ຕ້ອງແຈ້ງຕອບເປັນລາຍລັກອັກສອນພ້ອມທັງເຫດຜົນພາຍໃນເວລາ ເຈັດ ວັນລັດຖະການ.

### ມາດຕາ 26 ການຂຶ້ນທະບຽນສະຫະກອນ

ພາຍຫຼັງໄດ້ຮັບອະນຸຍາດສ້າງຕັ້ງຈາກຂະແໜງການທີ່ກ່ຽວຂ້ອງແລ້ວ ສະຫະກອນ ຕ້ອງໄປແຈ້ງຂຶ້ນທະບຽນສະຫະກອນ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ພາຍໃນເວລາ ສິບຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບອະນຸມັດສ້າງຕັ້ງ.

ຂະແໜງການອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາອອກໃບທະບຽນສະຫະກອນ ພາຍໃນເວລາ ສາມ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍຈົດທະບຽນສະຫະກອນເປັນຕົ້ນໄປ.

## ໝວດທີ 2
## ສິດ ແລະ ພັນທະຂອງສະຫະກອນ

### ມາດຕາ 27 ສິດຂອງສະຫະກອນ

ສະຫະກອນ ມີ ສິດ ດັ່ງນີ້:

1. ສົ່ງເສີມການຜະລິດຂອງສະມາຊິກ, ດຳເນີນການຄ້າ, ການບໍລິການ ແລະ ດຳເນີນທຸລະກິດອື່ນ ຕາມທີ່ໄດ້ຮັບອະນຸຍາດ;

2. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ຈັດກອງປະຊຸມ ເພື່ອປຶກສາຫາລືຕ່າງໆ ຕາມແຜນການຂອງສະຫະກອນ;

3. ຮັບສະມາຊິກຢ່າງເປີດກວ້າງ ບົນພື້ນຖານດ້ວຍຄວາມສະໝັກໃຈ;

4. ຍາດແຍ່ງການຊ່ວຍເຫຼືອ ດ້ານເຕັກນິກ, ວິຊາການ ແລະ ທຶນຮອນ ຈາກພາກສ່ວນກ່ຽວຂ້ອງ ທັງພາກລັດ ແລະ ພາກເອກະຊົນ;

5. ກູ້ຢືມເງິນ ນຳທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ເພື່ອມາລົງທຶນໃນທຸລະກິດຂອງຕົນ;

6. ສ້າງ, ຄຸ້ມຄອງ ແລະ ປະຕິບັດນະໂຍບາຍສະຫວັດດີການ ແກ່ສະມາຊິກ, ຄອບຄົວ ແລະ ສັງຄົມ ໃຫ້ຖືກຕ້ອງ ແລະ ເປັນທຳ;

7. ເຂົ້າຮ່ວມການວາງສະແດງ ແລະ ຈຳໜ່າຍສິນຄ້າຂອງສະຫະກອນ;

8. ຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງສະຫະກອນ;

9. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 28 ພັນທະຂອງສະຫະກອນ**

ສະຫະກອນ ມີ ພັນທະ ດັ່ງນີ້:

1. ເຕົ້າໂຮມບັນດາສະມາຊິກ ເຂົ້າສູ່ການຈັດຕັ້ງດຽວກັນ;

2. ປະສານງານ ແລະ ຍາດແຍ່ງການຊ່ວຍເຫຼືອ ນຳພາກສ່ວນອື່ນ;

3. ໃຫ້ການຊ່ວຍເຫຼືອ ແລະ ປົກປ້ອງຜົນປະໂຫຍດອັນຊອບທຳ ຂອງບັນດາສະມາຊິກ;

4. ໄກ່ເກ່ຍຂໍ້ຂັດແຍ່ງ ລະຫວ່າງ ສະມາຊິກດ້ວຍກັນ;

5. ຊ່ວຍເຫຼືອດ້ານວິຊາການ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບການຜະລິດ, ການຄ້າ, ການຕະຫຼາດ ແລະ ການບໍລິການ ໃຫ້ແກ່ສະມາຊິກ;

6. ເຂົ້າຮ່ວມປຶກສາຫາລື ແລະ ປະກອບຄຳເຫັນ ຕໍ່ບັນຫາທີ່ພົວພັນກັບທຸລະກິດຂອງສະຫະກອນ;

7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງສະຫະກອນ ໃຫ້ຂະແໜງການກ່ຽວຂ້ອງ ທີ່ອະນຸຍາດສ້າງຕັ້ງ ຢ່າງເປັນປົກກະຕິ;

8. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ສະມາຊິກຂອງສະຫະກອນ

**ມາດຕາ 29 ເງື່ອນໄຂຂອງການເປັນສະມາຊິກ**

ສະມາຊິກຂອງສະຫະກອນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ບໍ່ແມ່ນນິຕິບຸກຄົນ;

2. ເປັນພົນລະເມືອງລາວ ມີອາຍຸ ສິບແປດ ປີ ຂຶ້ນໄປ ແລະ ບໍ່ເປັນຄົນບ້າເສຍຈິດ;

3. ສະໝັກໃຈ ແລະ ຖືຮຸ້ນ ຢ່າງໜ້ອຍ ໜຶ່ງ ຮຸ້ນ;

4. ບໍ່ມີໜີ້ສິນ ຫຼາຍກວ່າຊັບສິນ;

5. ເງື່ອນໄຂອື່ນ ຕາມການກຳນົດຂອງສະຫະກອນ.

**ມາດຕາ 30 ສິດ ແລະ ພັນທະຂອງສະມາຊິກ**

ສະມາຊິກສະຫະກອນ ມີ ສິດ ດັ່ງນີ້:

1. ເຂົ້າຮ່ວມໃນກິດຈະການວຽກງານ ທີ່ກ່ຽວຂ້ອງຂອງສະຫະກອນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະຫະກອນ;

2. ໄດ້ຮັບການແບ່ງປັນ ຜົນໄດ້ຮັບ ຫຼື ຜົນປະໂຫຍດອື່ນ ຕາມອັດຕາສ່ວນຮຸ້ນ ທີ່ຕົນຖື;

3. ໄດ້ຮັບການຊ່ວຍເຫຼືອ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳ;

4. ສະໝັກຮັບເລືອກຕັ້ງ ເປັນກຳມະການບໍລິຫານຂອງສະຫະກອນ;

5. ສະເໜີຄະນະບໍລິຫານຂອງສະຫະກອນ ເພື່ອເປີດກອງປະຊຸມວິສາມັນ;

6. ສະເໜີຂະແໜງການທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂບັນຫາໃດໜຶ່ງ ໃນກໍລະນີສະຫະກອນ ບໍ່ແກ້ໄຂ ຫຼື ບໍ່ສາມາດແກ້ໄຂໄດ້;

7. ລາອອກຈາກການເປັນສະມາຊິກ ໂດຍຮູບການຂາຍຮຸ້ນ;

8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ສະມາຊິກສະຫະກອນ ມີ ພັນທະ ດັ່ງນີ້:

1. ເຂົ້າຮ່ວມກອງປະຊຸມ, ລົງຄະແນນສຽງ, ສະເໜີ ແລະ ປະກອບຄຳຄິດຄຳເຫັນດ້ານຕ່າງໆ ລວມທັງ ບັນຫາ ກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ;

2. ຮັກສາຄວາມສາມັກຄີ ລະຫວ່າງ ສະມາຊິກດ້ວຍກັນ, ຮັກສາກຽດສັກສີ, ຄວາມລັບດ້ານທຸລະກິດ ແລະ ຜົນປະໂຫຍດອື່ນຂອງສະຫະກອນ;

3. ຮັບຜິດຊອບຕໍ່ໜີ້ສິນຂອງສະຫະກອນ ເທົ່າກັບຈຳນວນຮຸ້ນ ທີ່ຍັງບໍ່ທັນໄດ້ຖອກເຕັມ;

4. ກວດກາ ຊັບສິນ ແລະ ບັນຊີການເງິນ ຂອງສະຫະກອນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະຫະກອນ;

5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໂຄງປະກອບການຈັດຕັ້ງ

**ມາດຕາ 31 ໂຄງປະກອບການຈັດຕັ້ງຂອງສະຫະກອນ**

ໂຄງປະກອບການຈັດຕັ້ງຂອງສະຫະກອນ ປະກອບດ້ວຍ:

1. ກອງປະຊຸມຂອງສະຫະກອນ;
2. ຄະນະບໍລິຫານສະຫະກອນ;
3. ຄະນະກວດກາສະຫະກອນ;
4. ຄະນະອຳນວຍການ;
5. ໜ່ວຍງານ.

**ມາດຕາ 32 ກອງປະຊຸມຂອງສະຫະກອນ**

ກອງປະຊຸມຂອງສະຫະກອນ ແມ່ນ ການຈັດຕັ້ງສູງສຸດຂອງສະຫະກອນ ຊຶ່ງປະກອບດ້ວຍ:

1. ກອງປະຊຸມສາມັນ ເປີດຂຶ້ນ ຢ່າງໜ້ອຍ ປີ ລະຄັ້ງ;

2. ກອງປະຊຸມວິສາມັນ ເປີດຂຶ້ນເມື່ອໃດກໍໄດ້ ເພື່ອພິຈາລະນາບັນຫາ ສຳຄັນ, ຈຳເປັນ ແລະ ຮີບດ່ວນ ຕາມການຮຽກເຊີນ ຂອງປະທານຄະນະບໍລິຫານສະຫະກອນ ຫຼື ສະມາຊິກທີ່ມີຈຳນວນ ໜຶ່ງສ່ວນສີ່ ຂອງສະມາຊິກທັງໝົດ.

ກອງປະຊຸມຂອງສະຫະກອນ ຈະເປີດຂຶ້ນໄດ້ ກໍຕໍ່ເມື່ອມີສະມາຊິກເຂົ້າຮ່ວມ ແຕ່ ສອງສ່ວນສາມ ຂຶ້ນໄປ ຂອງຈຳນວນສະມາຊິກທັງໝົດ.

ກອງປະຊຸມສາມັນຂອງສະຫະກອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງເອົາ ກົດລະບຽບຂອງສະຫະກອນ, ແຜນການດຳເນີນທຸລະກິດ ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ ຂອງສະຫະກອນ;

2. ຮັບຮອງ ບົດສະຫຼຸບລາຍງານ ການບັນຊີ, ການເງິນ ແລະ ບົດລາຍງານການກວດສອບ;

3. ພິຈາລະນາຕົກລົງ ກ່ຽວກັບການເພີ່ມ, ຫຼຸດຈຳນວນຮຸ້ນ ຫຼື ມູນຄ່າຮຸ້ນ ແລະ ການແບ່ງປັນເງິນປັນຜົນ;

4. ເລືອກຕັ້ງ ຫຼື ປົດຕຳແໜ່ງ ຄະນະບໍລິຫານ ແລະ ຄະນະກວດກາ;

5. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຄະນະອຳນວຍການ;

6. ພິຈາລະນາຕົກລົງ ກ່ຽວກັບເບ້ຍປະຊຸມ, ເງິນອຸດໜູນ ແລະ ນະໂຍບາຍອື່ນ ໃຫ້ແກ່ຄະນະບໍລິຫານ ແລະ ຄະນະກວດກາ;

7. ພິຈາລະນາຕົກລົງ ກ່ຽວກັບເງິນເດືອນ, ເງິນອຸດໜູນ ແລະ ນະໂຍບາຍອື່ນ ໃຫ້ແກ່ຄະນະອຳນວຍການ ແລະ ພະນັກງານຂອງສະຫະກອນ;

8. ຕົກລົງບັນຫາສຳຄັນອື່ນຂອງສະຫະກອນ.

**ມາດຕາ 33 ຄະນະບໍລິຫານສະຫະກອນ**

ຄະນະບໍລິຫານສະຫະກອນ ປະກອບດ້ວຍ ສະມາຊິກ ແຕ່ ສາມ ຫາ ເກົ້າ ຄົນ ໃນນັ້ນມີ ປະທານ, ຮອງປະທານ ແລະ ກຳມະການ ຈຳນວນໜຶ່ງ ໂດຍຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍກອງປະຊຸມຂອງສະຫະກອນ.

ຄະນະບໍລິຫານສະຫະກອນ ມີອາຍຸການ ຫ້າ ປີ ແລະ ໃຫ້ດຳເນີນການເລືອກຕັ້ງຄະນະບໍລິຫານຊຸດໃໝ່. ໃນກໍລະນີກຳມະການ ໃນຄະນະບໍລິຫານໃດໜຶ່ງວ່າງລົງ ກອງປະຊຸມຂອງສະຫະກອນ ເລືອກຕັ້ງກຳມະການໃໝ່ປ່ຽນແທນ ເພື່ອປະຕິບັດໜ້າທີ່ ຕາມໄລຍະເວລາຂອງອາຍຸການ ຂອງຄະນະບໍລິຫານທີ່ຍັງເຫຼືອ.

ຄະນະບໍລິຫານສະຫະກອນ ເຄື່ອນໄຫວວຽກງານຕາມລະບອບປະຊຸມ ຊຶ່ງປະຊຸມຢ່າງໜ້ອຍ ສາມ ເດືອນ ຕໍ່ຄັ້ງ.

ຄະນະບໍລິຫານຂອງສະຫະກອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍມະຕິກອງປະຊຸມຂອງສະຫະກອນ;

2. ສະເໜີແຜນດຳເນີນທຸລະກິດ ແລະ ການເຄື່ອນໄຫວປະຈຳປີ ຕໍ່ກອງປະຊຸມຂອງສະຫະກອນ;

3. ຊຸກຍູ້ ແລະ ຕິດຕາມ ກວດກາ ການເຄື່ອນໄຫວ ຂອງຄະນະກວດກາ ແລະ ຄະນະອຳນວຍການ;

4. ຮັບຮອງເອົາລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ບໍລິຫານສະຫະກອນ ຕາມການສະເໜີຂອງຜູ້ອຳນວຍການ;

5. ເລືອກຕັ້ງ ປະທານ, ຮອງປະທານ ແລະ ກຳມະການ ຂອງຄະນະບໍລິຫານ ພ້ອມທັງແບ່ງຄວາມຮັບຜິດຊອບ ໃຫ້ແຕ່ລະຄົນ;

6. ສະເໜີແຕ່ງຕັ້ງ ແລະ ປົດຕຳແໜ່ງ ຄະນະອຳນວຍການ;

7. ອະນຸມັດການຈ້າງ ຫຼື ຍົກເລີກການວ່າຈ້າງພະນັກງານຂອງສະຫະກອນ;

8. ພິຈາລະນາ ຮັບສະມາຊິກໃໝ່ ແລະ ການລາອອກ ຂອງສະມາຊິກສະຫະກອນ ບົນພື້ນຖານເຫັນດີຂອງສະມາຊິກ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

**ມາດຕາ 34 ຄະນະກວດກາສະຫະກອນ**

ຄະນະກວດກາສະຫະກອນ ປະກອບດ້ວຍ ສະມາຊິກ ແຕ່ ສາມ ຫາ ຫ້າ ຄົນ ໃນນັ້ນ ມີ ປະທານ, ຮອງປະທານ ແລະ ກຳມະການ ຈຳນວນໜຶ່ງ ໂດຍຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍກອງປະຊຸມຂອງສະຫະກອນ.

ຄະນະກວດກາສະຫະກອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງ ລະບຽບການ ກ່ຽວກັບການກວດກາ ແລະ ການລາຍງານ ຂອງສະຫະກອນ;

2. ກວດກາການເຄື່ອນໄຫວວຽກງານຂອງສະຫະກອນ ເປັນຕົ້ນ ການເງິນ, ການບັນຊີ, ການນຳໃຊ້ທຶນ ແລະ ຊັບສິນຂອງສະຫະກອນ;

3. ເຂົ້າຮ່ວມກອງປະຊຸມ ຂອງຄະນະບໍລິຫານ ແລະ ກອງປະຊຸມຂອງສະຫະກອນ;

4. ທວງໃຫ້ຜູ້ທີ່ກ່ຽວຂ້ອງໃນສະຫະກອນ ສະໜອງເອກະສານ, ຂໍ້ມູນຕ່າງໆທີ່ຕ້ອງການ ເພື່ອຮັບໃຊ້ວຽກງານກວດກາ ພ້ອມທັງຮັກສາຂໍ້ມູນດັ່ງກ່າວ ໃຫ້ເປັນຄວາມລັບ;

5. ລາຍງານ ກ່ຽວກັບການລະເມີດ ກົດໝາຍ, ກົດລະບຽບສະຫະກອນ ຕໍ່ຄະນະບໍລິຫານສະຫະກອນ ແລະ ກອງປະຊຸມຂອງສະຫະກອນ ພ້ອມທັງສະເໜີມາດຕະການ ແລະ ວິທີການແກ້ໄຂ;

6. ສະເໜີກອງປະຊຸມຂອງສະຫະກອນ ພິຈາລະນາຈ້າງຜູ້ກວດສອບບັນຊີອິດສະລະ ເພື່ອກວດສອບບັນຊີຂອງສະຫະກອນ ໃນກໍລະນີຈຳເປັນ;

7. ລາຍງານຜົນການກວດກາ ຕໍ່ກອງປະຊຸມຄະນະບໍລິຫານ ແລະ ກອງປະຊຸມຂອງສະຫະກອນ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

**ມາດຕາ 35 ຄະນະອຳນວຍການ**

ຄະນະອຳນວຍການ ປະກອບດ້ວຍ ຜູ້ອຳນວຍການ ແລະ ຮອງອຳນວຍການ.

ຄະນະອຳນວຍການ ເປັນຜູ້ບໍລິຫານຈັດການວຽກງານປະຈຳວັນ ໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຕາມກົດໝາຍ, ກົດລະບຽບຂອງສະຫະກອນ ແລະ ຕາມການມອບໝາຍ ຂອງຄະນະບໍລິຫານສະຫະກອນ.

ຮອງຄະນະອຳນວຍການ ມີໜ້າທີ່ຊ່ວຍຜູ້ອຳນວຍການ ໃນການບໍລິຫານວຽກງານຂອງສະຫະກອນ ທັງເປັນຜູ້ຮັກສາການແທນ ໃນກໍລະນີຜູ້ອຳນວຍການຕິດຂັດ ຕາມການມອບໝາຍຂອງຜູ້ອຳນວຍການ.

ຜູ້ອຳນວຍການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ບໍລິຫານວຽກງານປະຈຳວັນ ແລະ ຮັບຜິດຊອບຕໍ່ຜົນການດຳເນີນທຸລະກິດ ຂອງສະຫະກອນ;

2. ສ້າງ ຫຼື ດັດແກ້ ແຜນດຳເນີນທຸລະກິດ ແລະ ແຜນການເຄື່ອນໄຫວປະຈຳປີ ສະເໜີຄະນະບໍລິຫານສະຫະກອນ;

3. ຄຸ້ມຄອງການນຳໃຊ້ ຊັບສິນ ແລະ ທຶນ ຂອງສະຫະກອນ;

4. ເຂົ້າຮ່ວມ ກອງປະຊຸມຂອງສະຫະກອນ, ກອງປະຊຸມຄະນະບໍລິຫານ ຫຼື ກອງປະຊຸມອື່ນ ທີ່ກ່ຽວຂ້ອງ ກັບວຽກງານສະຫະກອນ;

5. ສະໜອງຂໍ້ມູນ ແລະ ໃຫ້ຄຳຊີ້ແຈງບັນຫາຕ່າງໆ ທີ່ຄະນະກວດກາ, ຄະນະບໍລິຫານສະຫະກອນ ແລະ ກອງປະຊຸມຂອງສະຫະກອນ ມີຄວາມສົນໃຈ;

6. ບັນຈຸ, ສັບຊ້ອນ ພະນັກງານຂອງສະຫະກອນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ສະເໜີ ຈ້າງ ຫຼື ເລີກຈ້າງ ພະນັກງານຂອງສະຫະກອນ ໃຫ້ຄະນະບໍລິຫານ ພິຈາລະນາອະນຸມັດ;

8. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວການດຳເນີນທຸລະກິດ ຕໍ່ຄະນະບໍລິຫານສະຫະກອນ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

**ມາດຕາ 36 ໜ່ວຍງານສະຫະກອນ**

ສະຫະກອນ ມີໜ່ວຍງານທີ່ຮັບຜິດຊອບວຽກງານ ການເງິນ, ການບັນຊີ ແລະ ໜ່ວຍງານອື່ນ ຕາມຄວາມຈຳເປັນ, ເໝາະສົມກັບຂະໜາດ ແລະ ຈຸດພິເສດ ຂອງສະຫະກອນ.

ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວ ລວມທັງຄວາມຮັບຜິດຊອບຂອງແຕ່ລະໜ່ວຍງານ ໄດ້ກຳນົດໄວ້ໃນກົດລະບຽບຂອງສະຫະກອນ.

## ໝວດທີ 5
## ຊັບສິນ ແລະ ການກວດສອບ

**ມາດຕາ 37 ແຫຼ່ງທຶນສະຫະກອນ**

ທຶນສະຫະກອນ ໄດ້ມາຈາກແຫຼ່ງ ດັ່ງນີ້:

1. ການປະກອບຂອງບັນດາສະມາຊິກ;
2. ການດໍາເນີນທຸລະກິດຂອງສະຫະກອນ;
3. ການກູ້ຢືມ ຫຼື ການຊ່ວຍເຫຼືອ ຈາກພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 38 ການປະກອບທຶນຂອງສະມາຊິກ**

ສະມາຊິກສະຫະກອນ ຕ້ອງປະກອບທຶນ ໃນເວລາເຂົ້າເປັນສະມາຊິກສະຫະກອນ. ທຶນທີ່ສະມາຊິກປະກອບແບ່ງເປັນຮຸ້ນ ຊຶ່ງສະມາຊິກຜູ້ໜຶ່ງ ຕ້ອງຖືຮຸ້ນ ຢ່າງໜ້ອຍ ໜຶ່ງ ຮຸ້ນ ແຕ່ສູງສຸດບໍ່ໃຫ້ເກີນ ຊາວສ່ວນຮ້ອຍ ຂອງຈໍານວນຮຸ້ນທັງໝົດຂອງສະຫະກອນ.

ນອກຈາກທຶນທີ່ໄດ້ປະກອບ ໃນເວລາເຂົ້າເປັນສະມາຊິກແລ້ວ ສະມາຊິກ ຍັງສາມາດປະກອບທຶນໄດ້ ຕາມການຕົກລົງຂອງກອງປະຊຸມຂອງສະຫະກອນ.

**ມາດຕາ 39 ການແບ່ງປັນເງິນປັນຜົນ**

ກໍາໄລສຸດທິຂອງສະຫະກອນ ພາຍຫຼັງທີ່ໄດ້ຫັກເຂົ້າລັງຕ່າງໆ ຕາມກົດລະບຽບແລ້ວ ໃຫ້ແບ່ງປັນຜົນ ແກ່ສະມາຊິກ ຕາມອັດຕາສ່ວນຮຸ້ນ ທີ່ສະມາຊິກແຕ່ລະຄົນຖືຮຸ້ນ.

ກອງປະຊຸມຂອງສະຫະກອນ ເປັນຜູ້ຕົກລົງ ກ່ຽວກັບການແບ່ງປັນເງິນປັນຜົນ.

**ມາດຕາ 40 ເງິນສ່ວນແບ່ງຈາກການດໍາເນີນທຸລະກິດຮ່ວມ**

ເງິນສ່ວນແບ່ງຈາກການດໍາເນີນທຸລະກິດຮ່ວມ ຂອງສະມາຊິກ ກັບສະຫະກອນ ແມ່ນ ເງິນທີ່ໄດ້ມາຈາກການປະກອບສ່ວນຂອງສະມາຊິກ ໃນກິດຈະການຂອງສະຫະກອນ ເຊັ່ນ ການນໍາເອົາຜົນຜະລິດຂອງຕົນໄປໃຫ້ສະຫະກອນຂາຍໃນຊື່ຂອງສະຫະກອນ ຫຼື ການນໍາສິນຄ້າມາຂາຍໃຫ້ສະຫະກອນ ໄປຂາຍ.

**ມາດຕາ 41 ລັງສໍາຮອງ ແລະ ລັງສະສົມ**

ລັງສໍາຮອງ ແມ່ນ ລັງເງິນທີ່ສ້າງຂຶ້ນ ເພື່ອທົດແທນການຂາດທຶນຈາກການດໍາເນີນທຸລະກິດສະຫະກອນ ຊຶ່ງຫັກຈາກກໍາໄລສຸດທິຂອງທຸກໆປີ ຢ່າງໜ້ອຍ ຫ້າ ສ່ວນຮ້ອຍ ຕາມການຕົກລົງຂອງກອງປະຊຸມຂອງສະຫະກອນ. ເມື່ອລັງສໍາຮອງນີ້ ມີເງິນສະສົມໄດ້ເຄິ່ງໜຶ່ງຂອງທຶນຈົດທະບຽນແລ້ວ ສາມາດໂຈະການຫັກເງິນເຂົ້າລັງສໍາຮອງດັ່ງກ່າວ.

ລັງສະສົມ ແມ່ນ ລັງເງິນທີ່ສ້າງຂຶ້ນ ເພື່ອສະສົມທຶນໄວ້ ນໍາໃຊ້ເຂົ້າໃນການຂະຫຍາຍກິດຈະການ, ການກໍ່ສ້າງໂຄງລ່າງພື້ນຖານ, ການປະກອບວັດຖຸເຕັກນິກ ແລະ ລົງທຶນ ລວມທັງການຊື້ຮຸ້ນຄືນຈາກສະມາຊິກ ໃນເວລາມີການຂໍລາອອກ ຊຶ່ງຫັກຈາກກໍາໄລສຸດທິຂອງທຸກໆປີ ຢ່າງໜ້ອຍ ສິບ ສ່ວນຮ້ອຍ ຕາມການຕົກລົງຂອງກອງປະຊຸມຂອງສະຫະກອນ.

**ມາດຕາ 42 ການຖືບັນຊີ**

ສະຫະກອນ ຕ້ອງຖືບັນຊີວິສາຫະກິດ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການບັນຊີ.

ມາດຕາ 43 ການກວດສອບ

ສະຫະກອນ ສາມາດຈ້າງຜູ້ກວດສອບອິດສະລະ ເພື່ອດຳເນີນການກວດສອບເອກະສານລາຍງານການເງິນ ຕາມການຕົກລົງຂອງກອງປະຊຸມຂອງສະຫະກອນ ຫຼື ຕາມການສະເໜີ ຂອງຂະແໜງການກ່ຽວຂ້ອງ ທີ່ອະນຸຍາດສ້າງຕັ້ງ ຫຼື ຂະແໜງການອື່ນທີ່ກ່ຽວຂ້ອງ ໃນກໍລະນີຈຳເປັນ.

## ໝວດທີ 6

## ການຄວບ, ການແຍກ ແລະ ການຍຸບເລີກ

**ມາດຕາ 44 ການຄວບສະຫະກອນ**

ສະຫະກອນໜຶ່ງ ສາມາດຄວບກັບສະຫະກອນໜຶ່ງ ຫຼື ຫຼາຍສະຫະກອນ ເພື່ອກາຍເປັນສະຫະກອນໃດໜຶ່ງ ຫຼື ສ້າງເປັນສະຫະກອນໃໝ່ ແຕ່ຕ້ອງມີມະຕິເຫັນດີຈາກກອງປະຊຸມສະຫະກອນ ຂອງແຕ່ລະສະຫະກອນ ແລະ ບໍ່ມີການຄັດຄ້ານຈາກເຈົ້າໜີ້.

ການຄວບ ເພື່ອກາຍເປັນສະຫະກອນໃດໜຶ່ງ ຕ້ອງແຈ້ງໃຫ້ຂະແໜງການກ່ຽວຂ້ອງ ທີ່ອະນຸຍາດສ້າງຕັ້ງ, ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການເງິນ. ສ່ວນການຄວບ ເພື່ອສ້າງຕັ້ງເປັນສະຫະກອນໃໝ່ ຕ້ອງດຳເນີນການສ້າງຕັ້ງ ຕາມດຳລັດສະບັບນີ້.

ການຄວບ ບໍ່ວ່າໃນກໍລະນີໃດກໍຕາມ ບໍ່ເຮັດໃຫ້ຄວາມຮັບຜິດຊອບ ຂອງແຕ່ລະສະຫະກອນ ຕົກໄປ.

**ມາດຕາ 45 ການແຍກສະຫະກອນ**

ສະຫະກອນໜຶ່ງ ສາມາດແຍກອອກເປັນ ສອງສະຫະກອນ ຫຼື ຫຼາຍສະຫະກອນໄດ້ ແຕ່ຕ້ອງມີມະຕິເຫັນດີຈາກກອງປະຊຸມຂອງສະຫະກອນ ແລະ ບໍ່ມີການຄັດຄ້ານຂອງເຈົ້າໜີ້.

ການແຍກສະຫະກອນ ຕ້ອງແຈ້ງໃຫ້ຂະແໜງການກ່ຽວຂ້ອງ ທີ່ອະນຸຍາດສ້າງຕັ້ງ, ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການເງິນ. ສຳລັບສະຫະກອນເກົ່າທີ່ຍັງຄົງຢູ່ ຫຼື ດຳເນີນການສ້າງຕັ້ງໃໝ່ສຳລັບສ່ວນທີ່ແຍກເປັນສະຫະກອນໃໝ່.

ການແຍກສະຫະກອນ ຕ້ອງກຳນົດແຈ້ງ ກ່ຽວກັບຊັບສິນ ແລະ ຄວາມຮັບຜິດຊອບ ຫຼື ພັນທະຂອງສະຫະກອນເກົ່າ ທີ່ຕົກລົງແຍກນັ້ນ.

**ມາດຕາ 46 ການຍຸບເລີກສະຫະກອນ**

ສະຫະກອນ ຈະຖືກຍຸບເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ດ້ວຍຄວາມສະໝັກໃຈ ໂດຍມີມະຕິກອງປະຊຸມຂອງສະຫະກອນ;
2. ບໍ່ມີການເຄື່ອນໄຫວ ຫຼື ດຳເນີນກິດຈະກຳ ຕາມທີ່ໄດ້ຮັບອະນຸຍາດ ພາຍໃນເວລາ ໜຶ່ງ ປີ ນັບແຕ່ວັນໄດ້ຮັບອະນຸຍາດ;
3. ລົ້ມລະລາຍ;
4. ສຳເລັດກິດຈະການ ຫຼື ຍຸບເລີກຕາມເຫດຜົນໃດໜຶ່ງ ຕາມທີ່ກຳນົດໄວ້ໃນກົດລະບຽບຂອງສະຫະກອນ;
5. ຖືກຖອນໃບອະນຸຍາດ ຫຼື ໃບທະບຽນວິສາຫະກິດ;
6. ເກີດເຫດສຸດວິໄສ;
7. ສານຕັດສິນໃຫ້ຍຸບເລີກ.

ສະຫະກອນທີ່ຍຸບເລີກ ຕ້ອງມີການຊຳລະສະສາງຊັບສິນ ແລະ ໜີ້ສິນຂອງຕົນ ຢ່າງຄົບຖ້ວນ ຕາມກົດໝາຍ.

## ໝວດທີ 7
## ສາຂາ ແລະ ສະຫະພັນສະຫະກອນ

**ມາດຕາ 47 ສາຂາສະຫະກອນ**

ສະຫະກອນ ສາມາດສ້າງຕັ້ງສາຂາຂອງຕົນຂຶ້ນ ຊຶ່ງຕ້ອງໄດ້ຮັບການເຫັນດີ ຈາກຂະແໜງການກ່ຽວຂ້ອງທີ່ອະນຸຍາດສ້າງຕັ້ງ ໂດຍມີການປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ ແລະ ແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ບ່ອນສາຂາຕັ້ງຢູ່.

**ມາດຕາ 48 ສະຫະພັນສະຫະກອນ**

ສະຫະພັນສະຫະກອນ ປະກອບມີ ສະຫະພັນສະຫະກອນຂັ້ນແຂວງ ແລະ ສະຫະພັນສະຫະກອນແຫ່ງຊາດ.

ສະຫະພັນສະຫະກອນຂັ້ນແຂວງ ແມ່ນ ການຈັດຕັ້ງທາງສັງຄົມທີ່ລວມຕົວຂອງສະຫະກອນ ຢູ່ໃນແຂວງເພື່ອສະໝັກໃຈສ້າງຕັ້ງ ແລະ ຮ່ວມມືຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ໃນການດຳເນີນທຸລະກິດ, ສ້າງຄວາມເຂັ້ມແຂງດ້ານວິຊາການ ແລະ ການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະຫະກອນ ບົນພື້ນຖານ ເປັນເຈົ້າຕົນເອງ, ຮັບຜິດຊອບດ້ວຍຕົນເອງ, ເຄື່ອນໄຫວຢ່າງສະເໝີພາບ, ເປັນປະຊາທິປະໄຕໃນການຈັດຕັ້ງ ແລະ ຄຸ້ມຄອງສະຫະພັນສະຫະກອນ.

ສະຫະພັນສະຫະກອນແຫ່ງຊາດ ແມ່ນ ການຈັດຕັ້ງທາງສັງຄົມຂອງສະຫະພັນສະຫະກອນຂັ້ນແຂວງ ທີ່ລວມຕົວກັນສ້າງຕັ້ງຂຶ້ນ ເພື່ອຮ່ວມມືຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ໃນການດຳເນີນທຸລະກິດ, ສ້າງຄວາມເຂັ້ມແຂງດ້ານວິຊາການ ແລະ ການປົກປ້ອງສິດຜົນປະໂຫຍດອັນຊອບທຳ ຂອງສະຫະພັນສະຫະກອນຂັ້ນແຂວງ ບົນພື້ນຖານເປັນເຈົ້າຕົນເອງ, ຮັບຜິດຊອບດ້ວຍຕົນເອງ, ເຄື່ອນໄຫວຢ່າງສະເໝີພາບ, ເປັນປະຊາທິປະໄຕໃນການຈັດຕັ້ງ ແລະ ຄຸ້ມຄອງສະຫະພັນສະຫະກອນ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ອະນຸຍາດສ້າງຕັ້ງສະຫະພັນສະຫະກອນ ໂດຍມີການປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ການສ້າງຕັ້ງ, ການຈົດທະບຽນ ແລະ ການເຄື່ອນໄຫວ ລວມທັງພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະຫະພັນສະຫະກອນ ໃຫ້ປະຕິບັດຕາມດຳລັດວ່າດ້ວຍສະມາຄົມ.

## ພາກທີ IV
## ການສົ່ງເສີມກຸ່ມ ແລະ ສະຫະກອນ

**ມາດຕາ 49 ການສົ່ງເສີມກຸ່ມ ແລະ ສະຫະກອນ**

ການສົ່ງເສີມກຸ່ມ ແລະ ສະຫະກອນ ດັ່ງນີ້:

1. ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ;
2. ການນຳໃຊ້ທີ່ດິນຂອງລັດ;
3. ການສະໜອງໂຄງລ່າງພື້ນຖານທີ່ຈຳເປັນ;
4. ການເຂົ້າເຖິງແຫຼ່ງທຶນ;
5. ນະໂຍບາຍດ້ານພາສີ ແລະ ອາກອນ;
6. ດ້ານວິຊາການ, ການໃຫ້ຄຳປຶກສາ ແລະ ພັດທະນາ;

7. ການເຂົ້າເຖິງ ແລະ ການຂະຫຍາຍຕະຫຼາດ;

8. ການນໍາໃຊ້ ແລະ ການປົກປ້ອງຊັບສິນທາງປັນຍາ;

9. ການສະໜອງ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ.

**ມາດຕາ 50 ການສ້າງສະພາບແວດລ້ອມທີ່ເອື້ອອໍານວຍ**

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕ້ອງເອົາໃຈໃສ່ຕໍ່ການສ້າງສະພາບແວດລ້ອມທີ່ເອື້ອອໍານວຍ ໃຫ້ແກ່ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງກຸ່ມ ແລະ ສະຫະກອນ ດ້ວຍ ການສ້າງ ແລະ ປັບປຸງ ລະບຽບການ ໃຫ້ມີຄວາມຈະແຈ້ງ ແລະ ຮັດກຸມ, ກໍານົດວິທີການແກ້ໄຂບັນຫາທີ່ເປັນການກີດໜ່ວງ ພ້ອມກັນນັ້ນກໍຕ້ອງເພີ່ມທະວີ ການບໍລິຫານ ແລະ ການບໍລິການຂອງຕົນ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ໂປ່ງໃສ.

**ມາດຕາ 51 ການນໍາໃຊ້ທີ່ດິນຂອງລັດ**

ຂະແໜງການ ແລະ ອົງການ ທີ່ກ່ຽວຂ້ອງ ເປັນເຈົ້າການສົມທົບ ກັບອົງການປົກຄອງທ້ອງຖິ່ນ ຄົ້ນຄວ້າ ແລະ ຈັດສັນທີ່ດິນຂອງລັດ ທີ່ກໍານົດເປັນເຂດຜະລິດ, ເຂດອານຸລັກ ໃຫ້ແກ່ ກຸ່ມ ແລະ ສະຫະກອນ ປົກປັກຮັກສາ ແລະ ນໍາໃຊ້ ເຂົ້າໃນເປົ້າໝາຍລວມໝູ່, ບໍ່ປ່ຽນເປົ້າໝາຍການນໍາໃຊ້ ໂດຍສອດຄ່ອງກັບແຜນການຈັດສັນທີ່ດິນຂັ້ນທ້ອງຖິ່ນ ແລະ ກົດໝາຍ.

**ມາດຕາ 52 ການສະໜອງໂຄງລ່າງພື້ນຖານທີ່ຈໍາເປັນ**

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເປັນເຈົ້າການຄົ້ນຄວ້າ ສ້າງ ແລະ ສະໜອງໂຄງລ່າງພື້ນຖານທີ່ຈໍາເປັນ ຕາມແຜນພັດທະນາເສດຖະກິດ-ສັງຄົມ ເພື່ອສ້າງເງື່ອນໄຂສະດວກ ໃຫ້ແກ່ ກຸ່ມ ແລະ ສະຫະກອນ ສາມາດນໍາໃຊ້ເຂົ້າ ໃນການຜະລິດ, ດໍາເນີນທຸລະກິດ ເປັນຕົ້ນ ເສັ້ນທາງຄົມມະນາຄົມ, ຊົນລະປະທານ, ຕາໜ່າງໄຟຟ້າ ແລະ ເຄືອຂ່າຍອິນເຕີເນັດ.

**ມາດຕາ 53 ການເຂົ້າເຖິງແຫຼ່ງທຶນ**

ກະຊວງແຜນການ ແລະ ການລົງທຶນ, ຊວງການເງິນ, ທະນາຄານ ແຫ່ງ ສປປ ລາວ, ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງກະສິກໍາ ແລະ ປ່າໄມ້ ແລະ ບັນດາອົງການຈັດຕັ້ງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຄົ້ນຄວ້າຊອກຫາແຫຼ່ງທຶນ ຫຼື ສ້າງເງື່ອນໄຂ ໃຫ້ແກ່ ກຸ່ມ ແລະ ສະຫະກອນ ສາມາດເຂົ້າເຖິງແຫຼ່ງທຶນ.

ທະນາຄານ ແຫ່ງ ສປປ ລາວ ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂ ໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນ ສ້າງກົນໄກ, ປັບປຸງໂຄງສ້າງດ້ານສິນເຊື່ອ ແລະ ອອກຜະລິດຕະພັນດ້ານການເງິນຫຼາຍປະເພດ ໃນການສະໜອງສິນເຊື່ອ, ການຄໍ້າປະກັນສິນເຊື່ອ ແລະ ການເຊົ່າສິນເຊື່ອ ເພື່ອຮັບປະກັນໃຫ້ ກຸ່ມ ແລະ ສະຫະກອນ ສາມາດເຂົ້າເຖິງແຫຼ່ງທຶນໄດ້ ຢ່າງທົ່ວເຖິງ.

**ມາດຕາ 54 ນະໂຍບາຍດ້ານພາສີ ແລະ ອາກອນ**

ກຸ່ມ ແລະ ສະຫະກອນ ຈະໄດ້ຮັບນະໂຍບາຍ ດ້ານພາສີ ແລະ ອາກອນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍການຄຸ້ມຄອງສວຍສາອາກອນ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍອາກອນລາຍໄດ້ ແລະ ກົດໝາຍວ່າດ້ວຍອາກອນຊົມໃຊ້. ໃນກໍລະນີພິເສດ ເປັນຕົ້ນ

ກິດຈະການຕິດພັນກັບແຜນງານການຄ້ຳປະກັນສະບຽງອາຫານ, ການປົກປັກຮັກສາ ແລະ ຟື້ນຟູສິ່ງແວດລ້ອມ, ການເສີມຂະຫຍາຍຫຼືຄິດປະດິດສ້າງ ແລະ ພູມປັນຍາທ້ອງຖິ່ນ ຫຼື ໄພພິບັດທຳມະຊາດ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ປະສານສົມທົບ ກັບກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຄົ້ນຄວ້ານະໂຍບາຍ ຍົກເວັ້ນ ຫຼື ຫຼຸດຜ່ອນດ້ານພາສີ ແລະ ອາກອນ ສະເໜີລັດຖະບານ ເພື່ອພິຈາລະນາ ນຳສະເໜີ ຕໍ່ສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຕົກລົງ.

**ມາດຕາ 55 ການບໍລິການໃຫ້ຄຳປຶກສາ ແລະ ພັດທະນາ**

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ໃນການໃຫ້ຄຳປຶກສາ ແລະ ພັດທະນາ ກຸ່ມ ແລະ ສະຫະກອນ ດ້ວຍການສ້າງຕັ້ງໜ່ວຍງານ ເພື່ອເຄື່ອນໄຫວໃຫ້ບໍລິການໃຫ້ຄຳປຶກສາ ແລະ ພັດທະນາ ກຸ່ມ ແລະ ສະຫະກອນ.

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕ້ອງສ້າງເງື່ອນໄຂ ແລະ ກົນໄກ ໃນການໃຫ້ການບໍລິການໃຫ້ຄຳປຶກສາ ແກ່ ກຸ່ມ ແລະ ສະຫະກອນ ຕາມພະລະບົດບາດຂອງຕົນ ພ້ອມທັງຊຸກຍູ້ ແລະ ສົ່ງເສີມ ພາກສ່ວນຕ່າງໆ ໃຫ້ບໍລິການຄຳປຶກສາ ແລະ ພັດທະນາ ກຸ່ມ ແລະ ສະຫະກອນ.

**ມາດຕາ 56 ການເຂົ້າເຖິງ ແລະ ການຂະຫຍາຍຕະຫຼາດ**

ຂະແໜງການກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃຫ້ການສະໜັບສະໜູນ ກຸ່ມ ແລະ ສະຫະກອນ ເພື່ອໃຫ້ສາມາດເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ ດ້ວຍການຈັດງານວາງສະແດງສິນຄ້າ ແລະ ການບໍລິການ, ການໂຄສະນາສິນຄ້າ, ການສຶກສາກ່ຽວກັບຕະຫຼາດ, ການແນະນຳຜະລິດຕະພັນ ແລະ ເຂົ້າຮ່ວມງານວາງສະແດງສິນຄ້າ ທັງພາຍໃນ ແລະ ຕ່າງປະເທດ, ການຈັບຄູ່ທຸລະກິດ ແລະ ການຮ່ວມລົງທຶນ ເພື່ອຂະຫຍາຍຕະຫຼາດ.

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ສ້າງເງື່ອນໄຂ ແລະ ໃຫ້ໂອກາດ ແກ່ ກຸ່ມ ແລະ ສະຫະກອນ ເປັນຜູ້ສະໜອງສິນຄ້າ ແລະ ການບໍລິການ ໃນໂຄງການຈັດຊື້ດ້ວຍງົບປະມານຂອງລັດ.

**ມາດຕາ 57 ການນຳໃຊ້ ແລະ ການປົກປ້ອງຊັບສິນທາງປັນຍາ**

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກ ໃຫ້ ກຸ່ມ ແລະ ສະຫະກອນ ປະດິດສ້າງ, ປະດິດຄິດແຕ່ງ, ສ້າງເສດຖະກິດພູມປັນຍາ ແລະ ນຳໃຊ້ຊັບສິນທາງປັນຍາ ພ້ອມທັງສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ກຸ່ມ ແລະ ສະຫະກອນ ໃນການຈົດທະບຽນ, ຄຸ້ມຄອງ ແລະ ປົກປ້ອງສິດຕໍ່ຊັບສິນທາງປັນຍາ.

**ມາດຕາ 58 ການສະໜອງ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບ ກັບຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ສ້າງ ແລະ ພັດທະນາ ລະບົບຖານຂໍ້ມູນຂ່າວສານ ກ່ຽວກັບ ກຸ່ມ ແລະ ສະຫະກອນ ເພື່ອໃຫ້ ກຸ່ມ, ສະຫະກອນ ແລະ ສະມາຊິກ ໄດ້ເຂົ້າເຖິງສະດວກ, ງ່າຍດາຍ ແລະ ທັນການ.

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕ້ອງສະໜອງຂໍ້ມູນທີ່ຕິດພັນກັບການຜະລິດ, ການເຄື່ອນໄຫວຂອງ ກຸ່ມ ແລະ ສະຫະກອນ ຕາມພາລະບົດບາດຂອງຕົນ ໃຫ້ແກ່ ກຸ່ມ ແລະ ສະຫະກອນ ດ້ວຍຮູບແບບເອເລັກໂຕຣນິກ, ປຶ້ມຄູ່ມື, ວາລະສານ ແລະ ແຜ່ນພັບໂຄສະນາ, ສື່ມວນຊົນ ພ້ອມທັງປະສານສົມທົບກັບກະຊວງສຶກສາທິການ ແລະ ກິລາ ເພື່ອເອົາວຽກງານ ກຸ່ມ ແລະ ສະຫະກອນ ບັນຈຸເຂົ້າໃນຫຼັກສູດການຮຽນ-ການສອນ.

**ມາດຕາ 59 ການສະເໜີ ແລະ ການໃຫ້ນະໂຍບາຍສົ່ງເສີມ**

ກຸ່ມ ແລະ ສະຫະກອນ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ຈົດທະບຽນ ຢ່າງຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ສາມາດຍື່ນຄຳຮ້ອງຕາມແບບພິມ ຕໍ່ຂະແໜງກະສິກຳ ແລະ ປ່າໄມ້ ເພື່ອຂໍຮັບນະໂຍບາຍສົ່ງເສີມ ຕາມທີ່ກຳນົດໄວ້ໃນມາດຕາ 49 ຂອງດຳລັດສະບັບນີ້.

ເອກະສານປະກອບຂໍຮັບນະໂຍບາຍສົ່ງເສີມ ມີດັ່ງນີ້:

1. ໃບຄຳຮ້ອງຂໍຮັບນະໂຍບາຍສົ່ງເສີມຕາມແບບພິມ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ;
2. ໃບອະນຸຍາດສ້າງຕັ້ງ ກຸ່ມ ແລະ ສະຫະກອນ;
3. ສຳລັບສະຫະກອນ ຕ້ອງມີໃບທະບຽນສະຫະກອນ.

ພາຍຫຼັງໄດ້ຮັບເອກະສານຂໍຮັບນະໂຍບາຍສົ່ງເສີມແລ້ວ ຂະແໜງກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ພິຈາລະນາໃຫ້ນະໂຍບາຍສົ່ງເສີມ.

## ພາກທີ V
## ຂໍ້ຫ້າມ

**ມາດຕາ 60 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳໃດໜຶ່ງ ດັ່ງນີ້:

1. ຂັດຂວາງການປະຕິບັດ ສິດ ແລະ ໜ້າທີ່ ຂອງ ກຸ່ມ ຫຼື ສະຫະກອນ;
2. ແອບອ້າງຊື່ ຫຼື ນຳໃຊ້ຊື່ ຂອງ ກຸ່ມ ຫຼື ສະຫະກອນ ເຄື່ອນໄຫວໃນທາງທີ່ບໍ່ຖືກຕ້ອງ;
3. ສວຍໃຊ້ ຫຼື ແຊກແຊງການຈັດຕັ້ງ ພາຍໃນ ກຸ່ມ ຫຼື ສະຫະກອນ;
4. ສ້າງຕັ້ງ ແລະ ເຄື່ອນໄຫວເປັນ ກຸ່ມ ຫຼື ສະຫະກອນ ໂດຍບໍ່ໄດ້ຮັບອະນຸຍາດ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 61 ຂໍ້ຫ້າມສຳລັບ ກຸ່ມ ແລະ ສະຫະກອນ**

ຫ້າມ ກຸ່ມ ຫຼື ສະຫະກອນ ມີ ພຶດຕິກຳໃດໜຶ່ງ ດັ່ງນີ້:

1. ດຳເນີນທຸລະກິດທີ່ບໍ່ຖືກຕ້ອງ ຕາມທີ່ໄດ້ຮັບອະນຸຍາດ;
2. ສະໜອງຂໍ້ມູນ ທີ່ບໍ່ຖືກຕ້ອງ, ບໍ່ຊັດເຈນ ຕໍ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
3. ປອມແປງ, ບິດເບືອນ ຂໍ້ມູນຂອງຕົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ເພື່ອຜົນປະໂຫຍດຂອງ ກຸ່ມ ຫຼື ສະຫະກອນ ຊຶ່ງສ້າງຄວາມເສຍຫາຍ ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
4. ໃຫ້ສິນບົນ ຫຼື ຜົນປະໂຫຍດອື່ນ ແກ່ພະນັກງານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 62 ຂໍ້ຫ້າມສຳລັບພະນັກງານ**

ຫ້າມ ພະນັກງານຄຸ້ມຄອງວຽກງານ ກຸ່ມ ຫຼື ສະຫະກອນ ມີ ພຶດຕິກຳໃດໜຶ່ງ ດັ່ງນີ້:

1. ເປີດເຜີຍຂໍ້ມູນ ທີ່ເປັນຄວາມລັບຂອງ ກຸ່ມ ຫຼື ສະຫະກອນ ເວັ້ນເສຍແຕ່ໄດ້ຮັບອະນຸຍາດ ຈາກກຸ່ມ ຫຼື ສະຫະກອນ;
2. ທວງ, ຮຽກເອົາ ຫຼື ຮັບສິນບົນ ຈາກກຸ່ມ ຫຼື ສະຫະກອນ;
3. ອອກ ຫຼື ປະຕິເສດ ການອອກໃບອະນຸຍາດສ້າງຕັ້ງ ກຸ່ມ ຫຼື ສະຫະກອນ ໂດຍບໍ່ຖືກຕ້ອງ ຕາມດຳລັດສະບັບນີ້;

4. ກົດໜ່ວງ, ຖ່ວງດຶງ ຫຼື ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງ ກຸ່ມ ຫຼື ສະຫະກອນ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ VI
## ການຄຸ້ມຄອງ ແລະ ການກວດກາວຽກງານ ກຸ່ມ ແລະ ສະຫະກອນ

### ມາດຕາ 63 ການຄຸ້ມຄອງວຽກງານ ກຸ່ມ ແລະ ສະຫະກອນ

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາວຽກງານ ກຸ່ມ ແລະ ສະຫະກອນ.

ອົງການຄຸ້ມຄອງ ແລະ ກວດກາວຽກງານ ກຸ່ມ ແລະ ສະຫະກອນ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້ ໂດຍແມ່ນ ກົມພັດທະນາຊົນນະບົດ ແລະ ສະຫະກອນ ເປັນເສນາທິການ;
2. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ໂດຍແມ່ນ ຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ ເປັນເສນາທິການ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ໂດຍແມ່ນ ໜ່ວຍງານພັດທະນາຊົນນະບົດ ແລະ ສະຫະກອນ ເປັນເສນາທິການ;
4. ອົງການປົກຄອງບ້ານ ໂດຍແມ່ນ ໜ່ວຍງານເສດຖະກິດ-ການເງິນບ້ານ ເປັນເສນາທິການ.

### ມາດຕາ 64 ສິດ ແລະ ໜ້າທີ່ຂອງກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ກຸ່ມ ແລະ ສະຫະກອນ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ກຸ່ມ ແລະ ສະຫະກອນ ໃຫ້ກາຍເປັນ ແຜນການ, ແຜນງານ, ໂຄງການ ແລະ ລະບຽບການ ແລ້ວຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ກຸ່ມ ແລະ ສະຫະກອນ;
4. ຄົ້ນຄວ້າໃຫ້ນະໂຍບາຍສົ່ງເສີມ ກຸ່ມ ແລະ ສະຫະກອນ ທຸກປະເພດ ພາຍຫຼັງໄດ້ຮັບອະນຸມັດສ້າງຕັ້ງ ແລະ ຈົດທະບຽນຢ່າງຖືກຕ້ອງຕາມດຳລັດສະບັບນີ້;
5. ອອກຄຳສັ່ງ, ຂໍ້ຕົກລົງ ແລະ ຄຳແນະນຳ ກ່ຽວກັບວຽກງານກຸ່ມ, ເຄືອຂ່າຍ ແລະ ສະຫະກອນ;
6. ອະນຸຍາດໃຫ້ ສ້າງຕັ້ງ, ໂຈະ ຫຼື ຖອນ ໃບອະນຸຍາດສ້າງຕັ້ງສະຫະກອນ ແລະ ສະຫະພັນສະຫະກອນ ຕາມຄວາມຮັບຜິດຊອບຂອງຕົນ;
7. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານ ກຸ່ມ, ສະຫະກອນ ແລະ ສະຫະພັນສະຫະກອນ ໂດຍສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;
8. ບຳລຸງສ້າງ ແລະ ຍົກລະດັບພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານ ກຸ່ມ ແລະ ສະຫະກອນ;
9. ປູກຈິດສຳນຶກໃຫ້ແກ່ທຸກພາກສ່ວນໃນສັງຄົມ ກ່ຽວກັບ ກຸ່ມ ແລະ ສະຫະກອນ;
10. ສ້າງ ແລະ ພັດທະນາລະບົບຖານຂໍ້ມູນກ່ຽວກັບ ວຽກງານສົ່ງເສີມ ກຸ່ມ ແລະ ສະຫະກອນ;

11. ສ້າງຄູ່ມື ແລະ ຈັດຝຶກອົບຮົມ ກ່ຽວກັບການຄຸ້ມຄອງ, ບໍລິຫານຈັດການ ແລະ ດຳເນີນງານ ໃຫ້ແກ່ ກຸ່ມ ແລະ ສະຫະກອນ;

12. ສ້າງ ແລະ ພັດທະນາ ລະບົບຖານຂໍ້ມູນ ກ່ຽວກັບວຽກງານ ກຸ່ມ ແລະ ສະຫະກອນ;

13. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບ ກຸ່ມ ແລະ ສະຫະກອນ;

14. ປະສານສົມທົບ ກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອ ຊຸກຍູ້, ສົ່ງເສີມ ການພັດທະນາ ກຸ່ມ ແລະ ສະຫະກອນ;

15. ພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານ ກຸ່ມ ແລະ ສະຫະກອນ;

16. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ກຸ່ມ ແລະ ສະຫະກອນ ໃຫ້ລັດຖະບານ ຢ່າງ ເປັນປົກກະຕິ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 65 ສິດ ແລະ ໜ້າທີ່ຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ**

ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ກຸ່ມ ແລະ ສະ ຫະກອນ ໃຫ້ກາຍເປັນ ແຜນການ, ແຜນງານ, ໂຄງການ ແລະ ລະບຽບການ ແລ້ວຈັດຕັ້ງປະຕິບັດ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ, ແຜນການ, ແຜນ ງານ ແລະ ໂຄງການ ກ່ຽວກັບ ກຸ່ມ ແລະ ສະຫະກອນ;

3. ອະນຸຍາດໃຫ້ສ້າງຕັ້ງ, ໂຈະ ຫຼື ຖອນໃບອະນຸຍາດສ້າງຕັ້ງກຸ່ມ ແລະ ສະຫະກອນ ທີ່ຢູ່ໃນຄວາມຮັບຜິດ ຊອບຂອງຕົນ;

4. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານ ກຸ່ມ ແລະ ສະຫະກອນ ໂດຍສົມທົບກັບ ພະແນກ ການ, ອົງການ ແລະ ອົງການປົກຄອງຂັ້ນເມືອງ ທີ່ກ່ຽວຂ້ອງ;

5. ສະເໜີ ບຳລຸງສ້າງ ແລະ ຍົກລະດັບ ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານ ກຸ່ມ ແລະ ສະ ຫະກອນ;

6. ເກັບກຳ, ສັງລວມ ແລະ ສ້າງຖານຂໍ້ມູນ ກ່ຽວກັບວຽກງານສົ່ງເສີມ ກຸ່ມ ແລະ ສະຫະກອນ;

7. ປຸກຈິດສຳນຶກໃຫ້ແກ່ທຸກພາກສ່ວນໃນສັງຄົມ ກ່ຽວກັບ ກຸ່ມ ແລະ ສະຫະກອນ;

8. ເກັບກຳ ແລະ ສັງລວມຂໍ້ມູນ ກ່ຽວກັບວຽກງານ ກຸ່ມ ແລະ ສະຫະກອນ ເພື່ອສ້າງເປັນຖານຂໍ້ມູນ;

9. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານກຸ່ມ ແລະ ສະຫະກອນ;

10.ປະສານສົມທົບ ກັບພະແນກການ, ອົງການ ແລະ ອົງການປົກຄອງຂັ້ນເມືອງ ທີ່ກ່ຽວຂ້ອງ ເພື່ອຊຸກຍູ້, ສົ່ງເສີມ ການພັດທະນາ ກຸ່ມ ແລະ ສະຫະກອນ;

11. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານ ກຸ່ມ ແລະ ສະຫະກອນ ຕາມການມອບໝາຍ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ກຸ່ມ ແລະ ສະຫະກອນ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 66 ສິດ ແລະ ໜ້າທີ່ຂອງຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ**

ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ກຸ່ມ ແລະ ສະຫະກອນ;
2. ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ກຸ່ມ ແລະ ສະຫະກອນ ໃຫ້ປະຊາຊົນ ແລະ ທຸກພາກສ່ວນ ຮັບຮູ້ ແລະ ເຂົ້າໃຈ;
3. ອະນຸຍາດໃຫ້ສ້າງຕັ້ງ, ໂຈະ ຫຼື ຖອນໃບອະນຸຍາດສ້າງຕັ້ງ ກຸ່ມ ແລະ ສະຫະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
4. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານ ກຸ່ມ ແລະ ສະຫະກອນ ໂດຍສົມທົບກັບຫ້ອງການ, ອົງການ ແລະ ອົງການປົກຄອງບ້ານ ທີ່ກ່ຽວຂ້ອງ;
5. ສະເໜີ ບຳລຸງສ້າງ ແລະ ຍົກລະດັບ ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານກຸ່ມ;
6. ເກັບກຳ, ສັງລວມ ແລະ ສ້າງຖານຂໍ້ມູນ ກ່ຽວກັບວຽກງານສົ່ງເສີມ ກຸ່ມ ແລະ ສະຫະກອນ;
7. ປຸກຈິດສຳນຶກໃຫ້ແກ່ທຸກພາກສ່ວນໃນສັງຄົມ ກ່ຽວກັບ ກຸ່ມ ແລະ ສະຫະກອນ;
8. ເກັບກຳ ແລະ ສັງລວມຂໍ້ມູນ ກ່ຽວກັບວຽກງານກຸ່ມ ເພື່ອສ້າງເປັນຖານຂໍ້ມູນ;
9. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ກ່ຽວກັບວຽກງານກຸ່ມ;
10. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານ ກຸ່ມ ແລະ ສະຫະກອນ;
11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ກຸ່ມ ແລະ ສະຫະກອນ ໃຫ້ພະແນກກະສິກຳ ແລະ ປ່າໄມ້, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 67 ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່ ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ຂໍ້ມູນຂ່າວສານ ກ່ຽວກັບວຽກງານ ກຸ່ມ ແລະ ສະຫະກອນ ໃຫ້ປະຊາຊົນພາຍໃນບ້ານຂອງຕົນ ໄດ້ຮັບຊາບ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ;
2. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ແກ່ການກວດກາ ກຸ່ມ ແລະ ສະຫະກອນ;
3. ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບວຽກງານ ກຸ່ມ ແລະ ສະຫະກອນ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 68 ສິດ ແລະ ໜ້າທີ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ໃນການຄຸ້ມຄອງ ກຸ່ມ ແລະ ສະຫະກອນ ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ອະນຸຍາດສ້າງຕັ້ງ, ຄຸ້ມຄອງ ແລະ ກວດກາ ກຸ່ມ ແລະ ສະຫະກອນ ໃນຂະແໜງການຂອງຕົນ;
2. ຂຶ້ນທະບຽນສະຫະກອນທຸກປະເພດ ພ້ອມທັງສ້າງ ແລະ ພັດທະນາຖານຂໍ້ມູນສະຫະກອນ;
3. ສະຫຼຸບລາຍງານ ກ່ຽວກັບສະຖິຕິ ສະຫະກອນ ໃຫ້ລັດຖະບານຊາບ ໃນແຕ່ລະໄລຍະ;
4. ປະສານສົມທົບກັບຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການທີ່ກ່ຽວຂ້ອງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 69 ສິດ ແລະ ໜ້າທີ່ຂອງຂະແໜງການ ແລະ ພາກສ່ວນອື່ນ**

ຂະແໜງການ ແລະ ພາກສ່ວນອື່ນ ມີ ສິດ ແລະ ໜ້າທີ່ ໃນການຄົ້ນຄວ້າ ແລະ ອະນຸຍາດໃຫ້ ສ້າງຕັ້ງ, ໂຈະ ຫຼື ຖອນໃບອະນຸຍາດສ້າງຕັ້ງ ກຸ່ມ ແລະ ສະຫະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ພ້ອມທັງປະສານສົມທົບ

ກັບຂະແໜງການກະສິກຳ ແລະ ປ່າໄມ້ ເພື່ອຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ກຸ່ມ ແລະ ສະຫະກອນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຄຸ້ມຄອງ ກຸ່ມ ແລະ ສະຫະກອນ ຕາມພາລະບົດບາດຂອງຕົນ ໃຫ້ໄດ້ຮັບຜົນດີ.

**ມາດຕາ 70 ເນື້ອໃນການກວດກາ**

ການກວດກາກຸ່ມ ແລະ ສະຫະກອນ ມີ ເນື້ອໃນ ດັ່ງນີ້:

1. ການປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ກຸ່ມ ແລະ ສະຫະກອນ;
2. ການປະຕິບັດໜ້າທີ່ຂອງ ຄະນະບໍລິຫານ, ຄະນະກວດກາ, ຄະນະອຳນວຍການ, ໜ່ວຍງານ ແລະ ພະນັກງານ
3. ການສ້າງ ແລະ ປະຕິບັດແຜນການກ່ຽວກັບວຽກງານ ກຸ່ມ ແລະ ສະຫະກອນ.

**ມາດຕາ 71 ຮູບການການກວດກາ**

ການກວດກາວຽກງານ ກຸ່ມ ແລະ ສະຫະກອນ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 72 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນ ວຽກງານຄຸ້ມຄອງ, ຕິດຕາມ ກວດກາ ກຸ່ມ ແລະ ສະຫະກອນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 73 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 74 ຕາປະທັບ ແລະ ກາໝາຍ**

ກຸ່ມ ແລະ ສະຫະກອນ ມີຕາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

ກຸ່ມ ແລະ ສະຫະກອນ ສາມາດມີ ກາໝາຍ ທີ່ເປັນສັນຍາລັກສະເພາະຂອງຕົນ ຊຶ່ງໄດ້ຮັບການຮັບຮອງຈາກຂະແໜງການ ທີ່ອະນຸຍາດສ້າງຕັ້ງ.

**ມາດຕາ 75 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການໃນການຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 76 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍສະຫະກອນ ສະບັບເລກທີ 136/ນຍ, ລົງວັນທີ 05 ມີນາ 2010.

ກຸ່ມ ແລະ ສະຫະກອນ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ ກ່ອນດຳລັດສະບັບນີ້ ມີຜົນສັກສິດ ໃຫ້ມາຂໍອະນຸຍາດສ້າງຕັ້ງຄືນ ຕາມດຳລັດສະບັບນີ້ ພາຍໃນເວລາ ຮ້ອຍແປດສິບ ວັນ ນັບແຕ່ວັນດຳລັດສະບັບນີ້ ມີຜົນສັກສິດເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ